# ທ່ານຄວນຮັບການກວດພະຍາດຕັບອັກເສບ B ບໍ?

- ພະຍາດຕັບອັກເສບ B ແມ່ນເຊື້ອໄວຣັສທີ່ທໍາຮ້າຍຕັບ ແລະ ສາມາດເຮັດໃຫ້ເກີດມະເຮັງຕັບ.
- ຫຼາຍຄົນບໍ່ຮູ້ວ່າເຂົາເຈົ້າຕິດເຊື້ອເພາະວ່າເຂົາເຈົ້າບໍ່ຮູ້ສຶກ ຫຼື ບໍ່ສະແດງອາການບໍ່ສະບາຍ, ແຕ່ເຂົາເຈົ້າສາມາດແຜ່ເຊື້ອໄວຣັດໄປສູ່ຜູ້ອື່ນໄດ້.
- ມີວັກຊີນທີ່ປອດໄພ ແລະ ມີປະສິດທິພາບທີ່ສາມາດປ້ອງກັນພະຍາດຕັບອັກເສບ B ໄດ້.

## ພະຍາດຕັບອັກເສບ B ແມ່ນແຜ່ຈາກ

- ຄົນຖືພາສູ່ລູກໃນເວລາເກີດ
- ການສໍາພັດຈາກການມີເພດສໍາພັນ
- ການສໍາພັດກັບເລືອດຈາກຜູ້ຕິດເຊື້ອ
- ການໃຊ້ມີດໂກນໜວດ, ແປງຖູແຂ້ວ, ຫຼື ມີດຕັດເລັບ

## ພະຍາດຕັບອັກເສບ B ບໍ່ໄດ້ແຜ່ຈາກ:

- ການກິນອາຫານ ຫຼື ການໃຊ້ເຄື່ອງກິນອາຫານຮ່ວມກັນ
- ການກອດ, ການຈູບ ຫຼື ການຈັບມື

## ໃຜທີ່ຄວນໄດ້ຮັບການກວດຫາເຊື້ອພະຍາດ

- ຄົນທີ່ຖືພາ
- ຜູ້ທີ່ຢູ່ກັບຄົນທີ່ເປັນພະຍາດຕັບອັກເສບ B
- ຄົນທີ່ເກີດຢູ່ໃນເຂດທີ່ມັກມີພະຍາດຕັບອັກເສບ B ເຊັ່ນອາຟຣິກາ ຫຼື ອາຊີ, ຫຼື ພໍ່ແມ່ທີ່ເກີດຢູ່ໃນເຂດເຫຼົ່ານັ້ນ
- ຄົນທີ່ມີປັດໃຈຄວາມສ່ຽງທີ່ອາດເກີດຂຶ້ນໄດ້

**ສໍາລັບຂໍ້ມູນເພີ່ມເຕີມ:**

**www.cdc.gov/hepatitis/hbv/**
**doh.wa.gov/hepbhub**

Hep B Hub
doh.wa.gov/hepbhub

Washington State Department of Health

DOH 420-408 May 2022 Lao

ເພື່ອຂໍເອົາເອກະສານນີ້ໃນຮູບແບບອື່ນ, ໃຫ້ໂທ 1-800-525-0127. ລູກຄ້າທີ່ຫູໜວກ ຫຼື ບໍ່ຄ່ອຍໄດ້ຍິນ, ກະລຸນາໂທ 711 (Washington Relay) ຫຼື ອີເມວຫາ civil.rights@doh.wa.gov.

ດັດແປງໂດຍການອະນຸຍາດຈາກ Minnesota Department of Health (ພະແນກສາທາລະນະສຸກຂອງລັດມິນນິໂຊຕາ)